**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ກົມບັນຊີແລະການເງິນ

ເລກທີ: 0056 /ກບງ

ນະຄອນຫຼວງວຽງຈັນ, ວັນທີ: 07 ມີນາ 2025

**ໜັງສືສະເໜີ**

**ຮຽນ: ທ່ານຫົວໜ້າກົມບໍລິການທະນາຄານ ທີ່ນັບຖືຢ່າງສູງ,**

**ເລື່ອງ: ການໂອນງົບປະມານລ່ວງໜ້າໃຫ້ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ປະຈຳປີ 2025.**

- ອີງຕາມດຳລັດວ່າດ້ວຍການເງິນ ແລະ ການບັນຊີ ຂອງ ທຫລ ສະບັບເລກທີ 163/ລບ ລົງວັນທີ 09 ມີນາ 2021;
- ອີງຕາມໜັງສືສະເໜີຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 65/ສຄຄຊ, ລົງວັນທີ 04 ມີນາ 2025.

ກົມບັນຊີແລະການເງິນ (ກບງ) ຂໍຖືເປັນກຽດສະເໜີມາຍັງທ່ານ ໂອນງົບປະມານໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) **ຈຳນວນ 2,500,000,000 ກີບ (ສອງຕື້ຫ້າຮ້ອຍລ້ານກີບ)** ເພື່ອຮັບໃຊ້ວຽກງານທີ່ຈຳເປັນໃນໄລຍະທີ່ລໍຖ້າການອະນຸມັດແຜນງົບປະມານ ປະຈຳປີ 2025 ຈາກລັດຖະບານ, **ໂດຍການບັນທຶກບັນຊີລ່ວງໜ້າດຸ່ນດ່ຽງງົບປະມານໃຫ້ ສຄຄຊ (ເລກບັນຊີ 1388112) ຄູ່ກັບເງິນຝາກກະແສລາຍວັນຂອງ ສຄຄຊ (ເລກບັນຊີ 00000001294 50101).** ພາຍຫຼັງໄດ້ຮັບອະນຸມັດແຜນງົບປະມານປະຈຳປີ 2025 ແລ້ວຈຶ່ງໄລ່ລຽງງົບປະມານຄືນ.

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານເພື່ອພິຈາລະນາ ແລະ ຈັດຕັ້ງປະຕິບັດດ້ວຍ.

**ຫົວໜ້າກົມ**

ທະນາຄານແຫ່ງ ສປປ ລາວ
ກົມບັນຊີແລະການເງິນ

M.N

**ນະຄອນສີ ມະໂນທັມ**

**ໝາຍເຫດ:** ສຳເນົາໃຫ້ ສຄຄຊ ເພື່ອຊາບ ແລະ ຕິດຕາມ